ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ
ນະຄອນຫຼວງວຽງຈັນ, ວັນທີ

(ຮ່າງ)

# ກົດໝາຍ
# ວ່າດ້ວຍ ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ ກວດກາ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ຫຼຸດຜ່ອນ ການບໍລິໂພກ, ຜົນກະທົບທີ່ເກີດຈາກການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ, ສົ່ງເສີມສຸຂະພາບ, ກັນພະຍາດ, ປົກປ້ອງຊີວິດ ແລະ ຊັບສິນ ຂອງພົນລະເມືອງ ປະກອບສ່ວນເຂົ້າໃນ ການປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການພັດທະນາ ເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການນຳໃຊ້ມາດຕະການ ເພື່ອຄຸ້ມຄອງ, ຕິດຕາມ ກວດກາ ແລະ ຈຳກັດ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ການຜະລິດ, ການປຸງແຕ່ງ, ການບັນຈຸ, ການຫຸ້ມຫໍ່, ການນຳເຂົ້າ, ການຈຳໜ່າຍ, ການຊື້ ຂາຍ, ການໂຄສະນາ, ສະຖານທີ່ບໍລິການ ແລະ ການດຳເນີນກິດຈະການອື່ນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຄື່ອງດື່ມທີ່ມີທາດເຫຼົ້າ** ໝາຍເຖິງ ເຄື່ອງດື່ມທຸກປະເພດ ທີ່ເປັນທາດເຫຼົ້າ ຫຼື ມີສ່ວນປະສົມຂອງທາດເຫຼົ້າເອຕາໂນນ (Ethanol) ເປັນຕົ້ນ ເຫຼົ້າຂາວ, ເຫຼົ້າບອງຢາ, ເຫຼົ້າວິດສະກີ, ວາຍ, ເບຍ;
2. **ທາດເຫຼົ້າ** ໝາຍເຖິງ ທາດແຫຼວ ໄວໄຟ, ລະເຫີຍ, ມີກິ່ນ ແຕ່ບໍ່ມີສີ ແລະ ພາໃຫ້ມຶນເມົາ ຫຼື ຊຶມເບື່ອ ຊຶ່ງປະກອບດ້ວຍ ທາດເຫຼົ້າ ເອຕາໂນນ (Ethanol) ທີ່ສາມາດດື່ມໄດ້ ແລະ ເມຕາໂນນ (Methanol) ທີ່ບໍ່ສາມາດດື່ມໄດ້ ຊຶ່ງນຳໃຊ້ເຂົ້າໃນອຸດສາຫະກຳ, ການແພດ ແລະ ເຊື້ອໄຟ;
3. **ເຫຼົ້າເຖື່ອນ** ໝາຍເຖິງ ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ບໍ່ໄດ້ຮັບອະນຸຍາດ ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈຳໜ່າຍ ເປັນຕົ້ນ ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ບໍ່ໄດ້ຂຶ້ນທະບຽນຢ່າງຖືກກົດໝາຍ, ລັກລອບ ສົ່ງອອກ, ນຳເຂົ້າມາຈຳໜ່າຍ;

4. **ເຫຼົ້າປອມ** ໝາຍເຖິງ ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຖືກສັບປ່ຽນສ່ວນປະກອບບາງຢ່າງອອກ ແລະ ໃຊ້ວັດຖຸອື່ນຜະລິດແທນ ເພື່ອຫຼອກລວງຜູ້ບໍລິໂພກໃຫ້ເຂົ້າໃຈຜິດ ຕໍ່ຄຸນນະພາບ ແລະ ປະລິມານ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ນໍາໃຊ້ເຄື່ອງໝາຍການຄ້າຂອງເຄື່ອງດື່ມທີ່ມີທາດເຫຼົ້າອື່ນ ທີ່ໄດ້ຂຶ້ນທະບຽນຢ່າງເປັນທາງການແລ້ວ;

5. **ຜູ້ດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບການອະນຸຍາດໃຫ້ດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມກົດໝາຍ ແລະ ລະບຽບ ການຂອງ ສປປ ລາວ;

6. **ການອຸປະຖໍາ** ໝາຍເຖິງ ການປະກອບສ່ວນຂອງຜູ້ດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ໂດຍທາງກົງ ຫຼື ທາງອ້ອມ ທີ່ບໍ່ມີລັກສະນະຈູງໃຈ ຫຼື ສົ່ງເສີມການຂາຍ ແລະ ບໍລິໂພກ ເຄື່ອງດື່ມທີ່ມີທາດເຫຼົ້າ;

7. **ຜູ້ໄດ້ຮັບຜົນຮ້າຍຈາກເຄື່ອງດື່ມທີ່ມີທາດເຫຼົ້າ** ໝາຍເຖິງ ຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ໄດ້ຮັບຜົນຮ້າຍທາງດ້ານສຸຂະພາບ, ຄອບຄົວ ແລະ ເສດຖະກິດ-ສັງຄົມ;

8. **ການຜະລິດແບບອຸດສາຫະກໍາ** ໝາຍເຖິງ ການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍເຄື່ອງຈັກ ຫຼື ເຄື່ອງ ມືທີ່ທັນສະໄໝ;

9. **ການຜະລິດແບບຫັດຖະກໍາ** ໝາຍເຖິງ ການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການນໍາໃຊ້ ເຄື່ອງ ມືແບບປະຖົມປະຖານ;

10. **ບຸກຄົນທີ່ໃສ່ເຄື່ອງແບບ** ໝາຍເຖິງ ແພດ, ພະຍາບານ, ຄູ, ທະຫານ, ຕໍາຫຼວດ, ນັກຮຽນ, ນັກສຶກສາ ແລະ ເຈົ້າໜ້າທີ່ອື່ນ ຂອງລັດ;

11. **ພະຍາດຊໍາເຮື້ອ** ໝາຍເຖິງ ພະຍາດບໍ່ຕິດຕໍ່ ທີ່ມີອາການແກ່ຍາວ ເຊັ່ນ ພະຍາດລະບົບປະສາດ, ຄວາມຈໍາເສື່ອມ, ພະຍາດຕັບແຂງ, ພະຍາດມະເຮັງ, ພະຍາດຫົວໃຈ-ເສັ້ນເລືອດ, ພະຍາດຄວາມດັນເລືອດສູງ, ພະຍາດເບົາຫວານ ແລະ ພະຍາດອື່ນ;

12. **ຫຼັກການສຸຂະນາໄມທີ່ດີ** ໝາຍເຖິງ ມາດຕະຖານສຸຂະນາໄມໃນການຜະລິດອາຫານທີ່ດີ (GHPs) ແມ່ນ ວິທີການ, ຂັ້ນຕອນ ແລະ ມາດຕະການຄວບຄຸມຄວາມປອດໄພອາຫານ ຂອງຂະບວນການຜະລິດອາຫານ ຕັ້ງແຕ່ການຜະລິດຂັ້ນຕົ້ນ, ສິ່ງປຸກສ້າງ ຫຼື ສະຖານປະກອບການ - ການອອກແບບ ສິ່ງອໍານວຍຄວາມສະດວກ ແລະ ອຸປະກອນ, ການຝຶກອົບຮົມ ແລະ ຄວາມສາມາດ, ການບໍາລຸງຮັກສາສິ່ງປຸກສ້າງ, ການທໍາຄວາມສະອາດ ແລະ ການຂ້າເຊື້ອ ແລະ ການຄວບຄຸມສັດນໍາເຊື້ອ, ສຸຂະນາໄມສ່ວນບຸກຄົນ, ການຄວບຄຸມການຜະລິດ, ຂໍ້ມູນຜະລິດຕະພັນ ແລະ ການໃຫ້ຄວາມຮັບຮູ້ແກ່ຜູ້ບໍລິໂພກ ແລະ ການຂົນສົ່ງ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ລັດ ໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການວາງນະໂຍບາຍ, ສ້າງ, ພັດທະນາ ແລະ ປະກອບບຸກຄະລາກອນ, ພາຫະນະ, ວັດຖຸປະກອນ, ສະໜອງງົບປະມານ, ກໍານົດ ແລະ ນໍາໃຊ້ມາດຕະການ ໃນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

ລັດ ເອົາໃຈໃສ່ໂຄສະນາສຶກສາອົບຮົມ ດ້ວຍຫຼາຍຮູບການ ເພື່ອປູກຈິດສໍານຶກທົ່ວສັງຄົມ ໂດຍສະເພາະແມ່ຍິງຖືພາ, ເດັກນ້ອຍ, ເຍົາວະຊົນ ແລະ ຊາວໜຸ່ມ ໃຫ້ເຫັນໄດ້ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ.

ລັດ ຊຸກຍູ້ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ໃຫ້ມີສ່ວນຮ່ວມ, ປະກອບ ສ່ວນ ໂດຍທາງກົງ ແລະ ທາງອ້ອມ ໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງການປິ່ນປົວ ແລະ ບໍາບັດ ຜູ້ໄດ້ຮັບຜົນຮ້າຍ, ຜູ້ເຈັບເປັນ ຈາກເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຂະແໜງການສາທາລະນະສຸກໃນແຕ່ລະໄລຍະ ລວມທັງສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ, ຮັບປະກັນ ຄວາມສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
3. ຮັບປະກັນ ການຫຼຸດຜ່ອນຜົນກະທົບ, ຈຳກັດ ກິດຈະການ ເຄື່ອງດື່ມທີ່ມີທາດເຫຼົ້າ ລວມທັງ ການ ສຶກສາອົບຮົມ, ປູກຈິດສຳນຶກ ກ່ຽວກັບ ຜົນຮ້າຍຈາກການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການບຳບັດ, ການປິ່ນປົວ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ;
4. ຮັບປະກັນ ການປະສານສົມທົບ ກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງສັງຄົມ ເຂົ້າໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 6 (ໃໝ່) ສິດ ແລະ ພັນທະຂອງພົນລະເມືອງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ພົນລະເມືອງທຸກຄົນ ມີສິດໄດ້ຮັບ ຂໍ້ມູນຂ່າວສານ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ, ການແນະນຳ, ການບຳບັດ, ການປິ່ນປົວ.

ພົນລະເມືອງທຸກຄົນ ມີພັນທະ ໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການ ເປັນແບບຢ່າງໃນການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ເປັນເຈົ້າການສຶກສາອົບຮົມ, ແນະນຳຜູ້ຢູ່ໃກ້ຄຽງ ຫຼື ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ເຫັນໄດ້ຜົນຮ້າຍຈາກການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 7 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ ສປປ ລາວ.

**ມາດຕາ 8 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການ ແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ, ການຍົກລະດັບທາງດ້ານວິຊາການ, ການຄົ້ນຄວ້າວິທະຍາສາດ ເພື່ອເຮັດໃຫ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ II
# ປະເພດ ແລະ ຜົນຮ້າຍ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ
## ໝວດທີ 1
## ປະເພດຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 9 ປະເພດເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ສອງປະເພດ ດັ່ງນີ້:

1. ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການບົ່ມ;
2. ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການກັ່ນ.

**ມາດຕາ 10 (ໃໝ່) ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການບົ່ມ**

ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການບົ່ມ ແມ່ນ ເຄື່ອງດື່ມທີ່ຜ່ານການປ່ຽນແປງທາງເຄມີ ຂອງທາດແປ້ງໃນອາຫານ ໃຫ້ກາຍເປັນສານປະກອບອື່ນ ເຊັ່ນ ທາດເຫຼົ້າ, ກົດສົ້ມ ໂດຍມີສານຈຳພວກເຊື້ອເຫັດ ເປັນຕົວເຮັດໃຫ້ເກີດປະຕິກິລິຍາ ເຊັ່ນ ວາຍ, ເບຍ, ເຫຼົ້າສາໂທ, ເຫຼົ້າໄຫ ແລະ ອື່ນໆ.

**ມາດຕາ 11 (ໃໝ່) ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການກັ່ນ**

**ເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານການກັ່ນ** ແມ່ນ ເຄື່ອງດື່ມທີ່ຜ່ານການແຍກສານລະລາຍທີ່ເປັນທາດແຫຼວ ອອກຈາກສ່ວນປະສົມ ໂດຍອາໄສຫຼັກ ການລະເຫີຍເປັນອາຍ ແລະ ລວມຕົວເປັນນໍ້າ ເຊັ່ນ ເຫຼົ້າຂາວ, ວິດສະກີ ແລະ ອື່ນໆ.

## ໝວດທີ 2
## ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 12 ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າ ມີຜົນຮ້າຍ ດັ່ງນີ້:

1. ຜົນຮ້າຍຕໍ່ສຸຂະພາບ;
2. ຜົນຮ້າຍຕໍ່ຄອບຄົວ;
3. ຜົນຮ້າຍຕໍ່ເສດຖະກິດ-ສັງຄົມ.

**ມາດຕາ 13 (ປັບປຸງ) ຜົນຮ້າຍຕໍ່ສຸຂະພາບ**

ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ມີຜົນຮ້າຍ ແລະ ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ທັງຮ່າງກາຍ ແລະ ຈິດໃຈ ຊຶ່ງເປັນສາເຫດ ທີ່ພາໃຫ້ເກີດ ພະຍາດຊໍາເຮື້ອ ແລະ ອຸບປະຕິເຫດ ທີ່ນໍາໄປສູ່ຄວາມພິການ ແລະ ການເສຍຊີວິດ.

ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າໃນໄລຍະຖືພາ ເປັນປັດໄຈສ່ຽງ ທີ່ພາໃຫ້ ຫຼຸລູກ, ເດັກເກີດກ່ອນກຳນົດ, ມີນໍ້າໜັກຕໍ່າກວ່າມາດຕະຖານ, ຜິດປົກກະຕິ, ພິການ, ມີພັດທະນາການທາງສະໝອງ ແລະ ຮ່າງກາຍຊ້າ.

**ມາດຕາ 14 (ປັບປຸງ) ຜົນຮ້າຍຕໍ່ຄອບຄົວ**

ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ພາໃຫ້ມີຜົນຮ້າຍຕໍ່ຄອບຄົວ ໂດຍສະເພາະ ການໃຊ້ຄວາມຮຸນແຮງຕໍ່ ແມ່ຍິງ, ເດັກ ແລະ ຜູ້ອາຍຸສູງ, ຄອບຄົວແຕກແຍກ, ຂາດຄວາມອົບອຸ່ນ, ຂາດຄວາມເປັນແບບຢ່າງ

ແລະ ຄວາມຮັບຜິດຊອບຕໍ່ຄອບຄົວ ທັງເປັນການສູນເສຍລາຍຮັບ ແລະ ເພີ່ມຄ່າໃຊ້ຈ່າຍທີ່ບໍ່ຈຳເປັນ ຂອງຄອບຄົວ.

**ມາດຕາ 15 (ປັບປຸງ) ຜົນຮ້າຍຕໍ່ເສດຖະກິດ-ສັງຄົມ**

ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ພາໃຫ້ ເກີດອຸບປະຕິເຫດ, ເກີດອາຊະຍາກຳ ແລະ ອື່ນໆ ຊຶ່ງແຕະຕ້ອງເຖິງການພັດທະນາຊັບພະຍາກອນມະນຸດ, ຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ສູນເສຍງົບປະມານຂອງລັດ ແລະ ເປັນຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ.

## ພາກທີ III
## ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 16 (ໃໝ່) ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີດັ່ງນີ້:

1. ການຄວບຄຸມກິດຈະການກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ
2. ການຄວບຄຸມຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ
3. ສະຫຼາກ ແລະ ຄຳເຕືອນສຸຂະພາບ
4. ລາຄາ, ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ
5. ການຄວບຄຸມ ສະຖານທີ່ດຳເນີນທຸລະກິດ, ທີ່ຕັ້ງສະຖານທີ່ບໍລິການ, ການ ຊື້ ຂາຍຍ່ອຍ, ໂຄສະນາ ແລະ ອຸປະຖຳ

## ໝວດທີ 1
## ການຄວບຄຸມກິດຈະການກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 17 (ໃໝ່) ກິດຈະການກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ**

ກິດຈະການກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ມີດັ່ງນີ້:

1. ການຜະລິດ;
2. ການປຸງແຕ່ງ;
3. ການບັນຈຸ;
4. ການຫຸ້ມຫໍ່;
5. ການສະໜອງ;
6. ການຈຳໜ່າຍ;
7. ການບໍລິການ;
8. ການເກັບຮັກສາ;
9. ການຂົນສົ່ງ;
10. ການສົ່ງອອກ;
11. ການນຳເຂົ້າ;
12. ການສົ່ງຜ່ານ;
13. ການຮຽກຄືນ;

14. ການທຳລາຍ;

15. ກິດຈະການອື່ນ.

**ມາດຕາ 18 (ປັບປຸງ) ການຜະລິດ**

ການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ມີ ສອງ ປະເພດ ຄື ແບບອຸດສາຫະກຳ ແລະ ແບບຫັດຖະກຳ.

ການຜະລິດ ແບບອຸດສະຫະກຳ ແລະ ແບບຫັດຖະກຳ ຕ້ອງຮັບປະກັນໃຫ້ມີຄວາມປອດໄພ ໂດຍປະຕິບັດຕາມຫຼັກການສຸຂານາໄມທີ່ດີ, ໄດ້ມາດຕະຖານການຜະລິດ ແລະ ຂຶ້ນທະບຽນຜະລິດຕະພັນ ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 (ປັບປຸງ) ການປຸງແຕ່ງ**

ການປຸງແຕ່ງ ແມ່ນ ການນຳເອົາເຫຼົ້າເອຕາໂນນ ມາປະສົມກັບສ່ວນປະກອບອື່ນ ຕາມຫຼັກການສຸຂານາໄມທີ່ດີ ໃຫ້ໄດ້ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າຊະນິດໃໝ່.

ສະຖານທີ່, ພາຊະນະ, ອຸປະກອນອື່ນ ແລະ ສ່ວນປະສົມ ທີ່ຮັບໃຊ້ການປຸງແຕ່ງ ຕ້ອງຮັບປະກັນຄວາມສະອາດ ແລະ ໄດ້ມາດຕະຖານ.

ຜູ້ປຸງແຕ່ງເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງບໍ່ແມ່ນຜູ້ເປັນພະຍາດຕິດຕໍ່, ມີການອະນາໄມສ່ວນບຸກຄົນ, ໃສ່ຊຸດທີ່ສະອາດ ແລະ ຕ້ອງກວດສຸຂະພາບ ຢ່າງໜ້ອຍ ສອງຄັ້ງຕໍ່ປີ.

**ມາດຕາ 20 (ປັບປຸງ) ການບັນຈຸ**

ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງບັນຈຸໃສ່ພາຊະນະ ທີ່ໃຊ້ສຳລັບອາຫານ ທີ່ມີຄຸນນະພາບ, ສະອາດ ແລະ ປອດໄພຕໍ່ສຸຂະພາບ ເປັນຕົ້ນ ຂວດແກ້ວ, ໄຫ, ກະປ໋ອງ, ຖົງ, ກ່ອງ.

**ມາດຕາ 21 (ປັບປຸງ) ການຫຸ້ມຫໍ່**

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຜະລິດຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງປະເທດ ຕ້ອງມີການຫຸ້ມຫໍ່ດ້ວຍວັດສະດຸທີ່ປອດໄພ ແລະ ທົນທານ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ການສະໜອງ**

ການສະໜອງເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ຜູ້ຈຳໜ່າຍ ທີ່ມີໃບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຕ້ອງຮັບປະກັນຄວາມປອດໄພ, ອະນາໄມ ແລະ ຄຸນນະພາບ.

**ມາດຕາ 23 (ປັບປຸງ) ການຈຳໜ່າຍ**

ການຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ ສປປ ລາວ ປະກອບດ້ວຍ ການຂາຍຍົກ ແລະ ການຂາຍຍ່ອຍ ຊຶ່ງຕ້ອງຢູ່ພາຍໃຕ້ ການຄວບຄຸມ, ການຕິດຕາມ, ການກວດກາ ຂອງຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 24 (ປັບປຸງ) ການບໍລິການ**

ການບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງດຳເນີນການບໍລິການ ໃນສະຖານທີ່ສະເພາະ ແລະ ເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 (ປັບປຸງ) ການເກັບຮັກສາ**

ການເກັບຮັກສາເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະຕິບັດຕາມ ເງື່ອນໄຂສະເພາະຂອງເຄື່ອງດື່ມແຕ່ລະປະເພດ ແລະ ຫຼັກການການເກັບຮັກສາທີ່ດີ ເພື່ອບໍ່ໃຫ້ເຄື່ອງດື່ມທີ່ມີທາດເຫຼົ້າ ເສື່ອມຄຸນນະພາບ, ໃຫ້ຢູ່ໃນສະພາບທີ່ບໍລິໂພກໄດ້ ແລະ ຮັບປະກັນຄວາມປອດໄພ.

**ມາດຕາ 26 (ປັບປຸງ) ການຂົນສົ່ງ**

ການຂົນສົ່ງເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ຕ້ອງປະຕິບັດຕາມຫຼັກການ ແລະ ວິທີການຂົນສົ່ງທີ່ດີ ແຕ່ຕົ້ນທາງຈົນເຖິງປາຍທາງ ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພຂອງເຄື່ອງດື່ມ ຕາມເງື່ອນໄຂສະເພາະຂອງເຄື່ອງດື່ມແຕ່ລະປະເພດ.

**ມາດຕາ 27 (ປັບປຸງ) ການສົ່ງອອກ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງສົ່ງອອກເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະກອບເອກະສານຂໍອະນຸຍາດສົ່ງອອກ ຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ປະເທດທີ່ນຳເຂົ້າ.

**ມາດຕາ 28 (ປັບປຸງ) ການນຳເຂົ້າ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງປະກອບເອກະສານຂໍ ຂຶ້ນທະບຽນຜະລິດຕະພັນ ແລະ ຂໍອະນຸຍາດນຳເຂົ້າ ຈາກຂະແໜງການສາທາລະນະສຸກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຢູ່ພາຍໃຕ້ການ ຄວບຄຸມ, ຕິດຕາມ, ກວດກາ ຂອງຂະແໜງ ການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 29 (ປັບປຸງ) ການສົ່ງຜ່ານ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຂົນສົ່ງເຄື່ອງດື່ມທີ່ມີທາດເຫຼົ້າ ຈາກປະເທດໃດໜຶ່ງ ຜ່ານ ສປປ ລາວ ໄປຫາປະເທດທີສາມ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ. ການສົ່ງຜ່ານນັ້ນ ຕ້ອງປິດ ແລະ ປະທັບຕາໃສ່ຕູ້ສິນຄ້າ ແລະ ຕ້ອງປະຕິບັດຕາມລະບຽບການ ການສົ່ງຜ່ານແດນ.

ໃນກໍລະນີທີ່ມີການຄ່ຽນຖ່າຍສິນຄ້າ ໃສ່ພາຫະນະບັນທຸກອື່ນ ຫຼື ລົງສາງ ກ່ອນການສົ່ງຜ່ານນັ້ນ ຕ້ອງມີການກວດກາຢັ້ງຢືນຈາກຂະແໜງການສາທາລະນະສຸກ ແລະ ພາສີດ່ານຊາຍແດນ ກ່ຽວກັບຈຳນວນ ແລະ ຊະນິດສິນຄ້າທີ່ໄດ້ແຈ້ງໄວ້ ພ້ອມທັງເອກະສານຕິດຕາມ ສິນຄ້າ ແລະ ແຈ້ງໄປຍັງດ່ານຂາອອກ ບ່ອນສິນຄ້າດັ່ງກ່າວຜ່ານອອກໄປ.

**ມາດຕາ 30 (ໃໝ່) ການຮຽກຄືນ**

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຈຳໜ່າຍ ບໍ່ໄດ້ມາດຕະຖານ, ເສື່ອມຄຸນນະພາບ, ໝົດອາຍຸການນຳໃຊ້, ມີຄວາມບົກພ່ອງ ຫຼື ບໍ່ສອດຄ່ອງກັບການ ຂຶ້ນທະບຽນຜະລິດຕະພັນ ແລະ ອະນຸຍາດ ຕ້ອງຖືກຮຽກຄືນ ຕາມແຈ້ງການຂອງກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ ອອກຈາກຕະຫຼາດ, ສະຖານທີ່ຈຳໜ່າຍ ຫຼື ສະຖານທີ່ບໍລິການ.

ການຮຽກຄືນມີ ສອງຮູບແບບ ດັ່ງນີ້:

1. ການຮຽກຄືນແບບສະໝັກໃຈ ຊຶ່ງດຳເນີນໂດຍຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້າ;

2. ການຮຽກຄືນແບບບັງຄັບ ຊຶ່ງດຳເນີນໂດຍຂະແໜງການສາທາລະນະສຸກ ຫຼື ຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ ແລະ ນຳເຂົ້າຕາມແຈ້ງການ ຂອງກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ.

ຜູ້ດຳເນີນທຸລະກິດ ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ບໍລິການ ຕ້ອງລາຍງານກ່ຽວກັບການຮຽກຄືນເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່ຂະແໜງການສາທາລະນະສຸກ ແລະ ຂະແໜງການກ່ຽວຂ້ອງ ແລະ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ນຳໃຊ້ໃນການຮຽກຄືນ.

### ມາດຕາ 31 (ໃໝ່) ການທຳລາຍ

ເຄື່ອງດື່ມທີ່ມີທາດເຫຼົ້າ ປອມ, ເຖື່ອນ ຫຼື ຖືກຮຽກຄືນ ຕ້ອງຖືກທຳລາຍ ຕາມວິທີການ ແລະ ຂັ້ນຕອນ ທີ່ກຳນົດໄວ້ໃນລະບຽບການ ຂອງກະຊວງສາທາລະນະສຸກ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອບໍ່ໃຫ້ເກີດຜົນກະທົບ ຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ.

ຜູ້ດຳເນີນທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນເຈົ້າການໃນການຈັດຕັ້ງປະຕິບັດການທຳລາຍ ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ ທີ່ເກີດຂຶ້ນໃນການທຳລາຍ.

## ໝວດທີ 2
## ການຄວບຄຸມຄຸນນະພາບເຄື່ອງດື່ມທີ່ມີທາດເຫຼົ້າ

### ມາດຕາ 32 (ປັບປຸງ) ການຄວບຄຸມຄຸນນະພາບເຄື່ອງດື່ມທີ່ມີທາດເຫຼົ້າ

ການຄວບຄຸມຄຸນນະພາບເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນການນຳໃຊ້ມາດຕະການຄວບຄຸມຄຸນນະພາບ ຕາມມາດຕະຖານ ແລະ ລະບຽບການຂອງກະຊວງສາທາລະນະສຸກ.

ມາດຕະການຄວບຄຸມຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ມາດຕະການທາງດ້ານສຸຂານາໄມ ຊຶ່ງແມ່ນ ການດຳເນີນມາດຕະການ ທີ່ນຳໃຊ້ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງຄົນຈາກຄວາມສ່ຽງ ທີ່ມາຈາກການປົນເປື້ອນໃນເຄື່ອງດື່ມທີ່ມີທາດເຫຼົ້າ;

2. ມາດຕະການທາງດ້ານເຕັກນິກ ຊຶ່ງແມ່ນ ການດຳເນີນຂັ້ນຕອນກ່ຽວກັບ ມາດຕະຖານການຜະລິດ, ວິທີການຜະລິດ, ການທົດສອບ, ການກວດກາ ແລະ ຢັ້ງຢືນຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຈາກກະຊວງສາທາລະນະສຸກ.

### ມາດຕາ 33 (ປັບປຸງ) ການຮັບປະກັນຄຸນນະພາບຂອງເຄື່ອງດື່ມທີ່ມີທາດເຫຼົ້າ

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ໄດ້ຜະລິດ, ປຸງແຕ່ງ, ຈຳໜ່າຍ, ສົ່ງອອກ ແລະ ນຳເຂົ້າ ຕ້ອງຮັບປະກັນໃຫ້ມີຄຸນນະພາບດີ ໂດຍປະຕິບັດຕາມຫຼັກການ ການຜະລິດທີ່ດີ, ການສຸຂານາໄມທີ່ດີ, ການວິເຄາະຄວາມສ່ຽງ, ການຄວບຄຸມຈຸດອັນຕະລາຍ ແລະ ຫຼັກການອື່ນທີ່ກ່ຽວຂ້ອງຢ່າງຖືກຕ້ອງ ພ້ອມທັງໄດ້ຮັບການຂຶ້ນທະບຽນຜະລິດຕະພັນ ຈາກກະຊວງສາທາລະນະສຸກ.

### ມາດຕາ 34 (ປັບປຸງ) ການທົດສອບ, ກວດກາ ແລະ ຢັ້ງຢືນ ຄຸນນະພາບ

ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຜະລິດ, ປຸງແຕ່ງ, ຈຳໜ່າຍ, ສົ່ງອອກ ແລະ ນຳເຂົ້າ ຕ້ອງໄດ້ຜ່ານການທົດສອບ, ກວດກາ ແລະ ຢັ້ງຢືນ ຄຸນນະພາບ ຕາມລະບຽບການທີ່ກ່ຽວຂ້ອງ ຂອງກະຊວງສາທາລະນະສຸກ.

## ໝວດທີ 3
## ສະຫຼາກ ແລະ ຄຳເຕືອນສຸຂະພາບ

**ມາດຕາ 35 (ປັບປຸງ) ສະຫຼາກ**

ສະຫຼາກ ແມ່ນ ເຄື່ອງໝາຍ, ຮູບພາບ ຫຼື ຂໍ້ຄວາມ ທີ່ສະແດງ ຄຳເຕືອນສຸຂະພາບ, ສ່ວນປະກອບຫຼັກ, ຂໍ້ມູນດ້ານໂພຊະນາການ, ການນຳໃຊ້, ການເກັບຮັກສາ, ຜູ້ຜະລິດ ຫຼື ຜູ້ຈຳໜ່າຍ, ປະລິມານທາດເຫຼົ້າເອຕາໂນນ ແລະ ທາດອື່ນ ໃນເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອໃຫ້ຜູ້ບໍລິໂພກຮັບຮູ້ຂໍ້ມູນຢ່າງຖືກຕ້ອງ.

ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈຳໜ່າຍ ຢູ່ ສປປ ລາວ ຕ້ອງຕິດສະຫຼາກເປັນພາສາລາວ. ສຳລັບການຕິດສະຫຼາກ ໃສ່ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ສົ່ງອອກ ໃຫ້ປະຕິບັດຕາມເງື່ອນໄຂຂອງປະເທດນຳເຂົ້າ.

ສຳລັບລາຍລະອຽດ ເນື້ອໃນ ແລະ ຮູບແບບ ຂອງສະຫຼາກຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ປະຕິບັດຕາມລະບຽບການທີ່ກະຊວງສາທາລະນະສຸກ ກຳນົດ.

**ມາດຕາ 36 (ປັບປຸງ) ຄຳເຕືອນສຸຂະພາບ**

ຄຳເຕືອນສຸຂະພາບ ແມ່ນ ຂໍ້ຄວາມ ທີ່ສະແດງເຖິງ ຜົນຮ້າຍ, ຄວາມເປັນອັນຕະລາຍ ຫຼື ພະຍາດທີ່ເກີດຈາກການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອໃຫ້ຜູ້ດື່ມ ຮັບຮູ້ຂໍ້ມູນຢ່າງຖືກຕ້ອງ.

ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຜະລິດ, ປຸງແຕ່ງ, ນຳເຂົ້າ ແລະ ຈຳໜ່າຍ ຢູ່ ສປປ ລາວ ຕ້ອງຕິດຄຳເຕືອນສຸຂະພາບເປັນພາສາລາວ. ສຳລັບການຕິດຄຳເຕືອນສຸຂະພາບ ໃສ່ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າທີ່ສົ່ງອອກ ໃຫ້ປະຕິບັດຕາມເງື່ອນໄຂຂອງປະເທດນຳເຂົ້າ.

ສຳລັບລາຍລະອຽດກ່ຽວກັບ ເນື້ອໃນ ແລະ ຮູບແບບ ຂອງຄຳເຕືອນສຸຂະພາບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ລາຄາ, ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 37 (ປັບປຸງ) ລາຄາ ເຄື່ອງດື່ມທີ່ມີທາດເຫຼົ້າ**

ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງມີການດັດສົມລາຄາ ໃຫ້ສອດຄ່ອງກັບ ນະໂຍບາຍ ພາສີ ອາກອນ ໃນແຕ່ລະໄລຍະ ເພື່ອຫຼຸດຜ່ອນການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ຢູ່ໃນສັງຄົມ.

ຂະແໜງການທີ່ກ່ຽວຂ້ອງຂອງລັດ ຕ້ອງຕິດຕາມ, ກວດກາ, ເກັບກຳຂໍ້ມູນ ກ່ຽວກັບລາຄາເຄື່ອງດື່ມທີ່ມີທາດເຫຼົ້າ ໃນແຕ່ລະໄລຍະ ເພື່ອປັບປຸງນະໂຍບາຍດ້ານ ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ.

ຜູ້ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຕິດລາຄາເປັນເງິນກີບຢ່າງເປີດເຜີຍ.

**ມາດຕາ 38 (ປັບປຸງ) ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ**

ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງເພີ່ມຂຶ້ນໃນແຕ່ລະໄລຍະ ໂດຍສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ.

ການເກັບ ພາສີ, ອາກອນ ເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ ແລະ ກົດໝາຍກ່ຽວກັບອາກອນ ເປັນຕົ້ນ ກົດໝາຍວ່າດ້ວຍອາກອນຊົມໃຊ້, ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ກົດໝາຍວ່າດ້ວຍອາກອນລາຍໄດ້.

## ໝວດທີ 5
## ການຄວບຄຸມ ສະຖານທີ່ດຳເນີນທຸລະກິດ, ທີ່ຕັ້ງສະຖານທີ່ບໍລິການ, ການຊື້ ຂາຍຍ່ອຍ, ການໂຄສະນາ ແລະ ອຸປະຖຳ

### ມາດຕາ 39 (ປັບປຸງ) ການຄວບຄຸມສະຖານທີ່ດຳເນີນທຸລະກິດ

ການຄວບຄຸມສະຖານທີ່ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການນຳໃຊ້ມາດຕະການຄວບຄຸມສະຖານທີ່ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ສະຖານທີ່ການ ຜະລິດ, ປຸງແຕ່ງ, ຈຳໜ່າຍ, ບໍລິການ, ຫຸ້ມຫໍ່ ແລະ ການເກັບຮັກສາເຄື່ອງດື່ມທີ່ມີທາດເຫຼົ້າ ຕາມມາດຕະຖານ ແລະ ລະບຽບການຂອງກະຊວງສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 40 (ປັບປຸງ) ສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ

ສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ສະຖານທີ່ໃຫ້ບໍລິການ ບັນເທີງ ປະເພດ ດິດສະໂກເທັກ, ໄນຄລັບ, ພັບ, ສະເນັກບາຣ, ບາຣ, ຄາຣາໂອເກະ ທີ່ມີເຄື່ອງດື່ມທີ່ມີທາດເຫຼົ້າ.

ທີ່ຕັ້ງ ສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຫ່າງຈາກສະຖານທີ່ ດັ່ງນີ້:

1. ສະຖານທີ່ບໍລິການສາທາລະນະສຸກ;
2. ສະຖານການສຶກສາ;
3. ສຳນັກງານ, ອົງການຂອງລັດ;
4. ສາສະໜາສະຖານ;
5. ສຳນັກງານຜູ້ຕາງໜ້າ;
6. ສວນສາທາລະນະ;
7. ໂຮງມະໂຫລະສົບ;
8. ສະໜາມກິລາ;
9. ໂຮງຈັກໂຮງງານ.

ກະຊວງສາທາລະນະສຸກ ເປັນຜູ້ກຳນົດໄລຍະຫ່າງ ທີ່ຕັ້ງສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຂອງແຕ່ລະສະຖານທີ່ ໂດຍປະສານສົມທົບກັບພາກສ່ວນກ່ຽວຂ້ອງ (ທາງເລືອກທີ1).

ສະຖານທີ່ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຫ່າງຈາກສະຖານທີ່ດັ່ງກ່າວ ຢ່າງໜ້ອຍ 500 ແມັດ (ທາງເລືອກທີ2).

### ມາດຕາ 41 (ປັບປຸງ) ການຊື້ ຂາຍຍ່ອຍ

ການຊື້ ຂາຍຍ່ອຍ ແມ່ນ ການຊື້ ຂາຍ ເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ຜູ້ບໍລິໂພກເພື່ອດື່ມເອງແຕ່ຫາກບໍ່ແມ່ນເພື່ອນຳໄປຂາຍຕໍ່.

ເຄື່ອງດື່ມທີ່ມີທາດເຫຼົ້າ ອະນຸຍາດໃຫ້ ຊື້ ຂາຍຍ່ອຍໄດ້ ສະເພາະແຕ່ເວລາ 16:00 ໂມງ ຫາ 23:00 ໂມງ.

### ມາດຕາ 42 (ປັບປຸງ) ການໂຄສະນາ

ການໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າທຸກຮູບແບບ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການສາທາລະນະສຸກ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ເນື້ອໃນການໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ຕ້ອງເປັນການໃຫ້ຄວາມຮູ້, ແນວຄິດສ້າງສັນຕໍ່ສັງຄົມ;

2. ຕ້ອງມີຄຳເຕືອນສຸຂະພາບ;
3. ບໍ່ມີລັກສະນະສົ່ງເສີມກິດຈະກຳທາງການຕະຫຼາດ ຫຼື ການຂາຍ;
4. ບໍ່ມີລັກສະນະຊວນເຊື່ອ ໃຫ້ມີການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;
5. ບໍ່ສະແດງເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ດື່ມເຄື່ອງດື່ມດັ່ງກ່າວ;
6. ບໍ່ສະແດງເຄື່ອງໝາຍການຄ້າ;
7. ບໍ່ໃຫ້ເປັນການສ້າງຄ່ານິຍົມ ກ່ຽວກັບການດື່ມເຄື່ອງດື່ມທີ່ມີທາດເຫຼົ້າໃຫ້ແກ່ສັງຄົມ.

ສຳລັບການໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານສື່ເອເລັກໂຕຣນິກ ເປັນຕົ້ນ ລາຍການວິທະຍຸ, ໂທລະພາບ, ປ້າຍເອເລັກໂຕຣນິກ ສາມາດໂຄສະນາໄດ້ແຕ່ເວລາ 22:00 ໂມງ - 00:00 ໂມງ.

**ມາດຕາ 43 (ປັບປຸງ) ການອຸປະຖຳ**

ການອຸປະຖຳ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕ້ອງບໍ່ຢູ່ໃນຮູບການໂຄສະນາສົ່ງເສີມການຈຳໜ່າຍ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ, ບໍ່ໃຫ້ສະແດງເຄື່ອງໝາຍການຄ້າຂອງບໍລິສັດ, ບໍ່ໃຫ້ອອກໂຄສະນາການອຸປະຖຳ, ບໍ່ໃຫ້ບັນທຶກພາບການອຸປະຖຳອອກຂ່າວ ຫຼື ຮູບການອື່ນ ທີ່ເປັນການສົ່ງເສີມການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ.

## ພາກທີ IV
## ການໃຫ້ຄວາມຮູ້, ສະໜອງ ຂໍ້ມູນ ຂ່າວສານ ແລະ ແກ້ໄຂ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 44 (ປັບປຸງ) ການໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ**

ການໃຫ້ຄວາມຮູ້ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນ ການໂຄສະນາ ແລະ ປຸກລະດົມ ພົນລະເມືອງ ເປັນຕົ້ນ ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາ, ກຳມະກອນ ເພື່ອປູກຈິດສຳນຶກຕ້ານ ແນວຄິດ, ຄ່ານິຍົມ ແລະ ພຶດຕິກຳໃນການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ໃຫ້ຫ່າງໄກຈາກເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍຮູບການ ແລະ ວິທີການຕ່າງໆ.

**ມາດຕາ 45 (ປັບປຸງ) ການສະໜອງ ຂໍ້ມູນ ຂ່າວສານ**

ການສະໜອງ ຂໍ້ມູນ ຂ່າວສານ ແມ່ນ ການໃຫ້ຂໍ້ມູນຂ່າວສານທີ່ມີລັກສະນະວິທະຍາສາດ ກ່ຽວກັບ ຜົນຮ້າຍ, ຄວາມເປັນອັນຕະລາຍ, ພະຍາດທີ່ເກີດຈາກເຄື່ອງດື່ມທີ່ມີທາດເຫຼົ້າ ແກ່ພົນລະເມືອງຢ່າງເປັນປົກກະຕິ ໂດຍຜ່ານ ຖານຂໍ້ມູນທາງການຂອງຂະແໜງການສາທາລະນະສຸກ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຫຼື ວິທີການອື່ນ ທີ່ເໝາະສົມ.

**ມາດຕາ 46 (ປັບປຸງ) ການ ລະດົມ ແລະ ສຶກສາອົບຮົມ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເອົາໃຈໃສ່ ລະດົມ ແລະ ສຶກສາອົບຮົມ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ ພ້ອມທັງ ແນະນຳ ໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງຜົນກະທົບ ຕໍ່ ສຸຂະພາບ, ຄອບຄົວ, ເສດຖະກິດ-ສັງຄົມ ເພື່ອໃຫ້ມີຄວາມຕື່ນຕົວ, ຫຼຸດຜ່ອນ ແລະ ກ້າວໄປເຖິງການຢຸດເຊົາ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 47 (ປັບປຸງ) ການຊ່ວຍເຫຼືອຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ**

ການຊ່ວຍເຫຼືອຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ ມີວິທີການ ດັ່ງນີ້:

1. ໃຫ້ຄໍາປຶກສາ, ແນະນໍາ ກ່ຽວກັບການຫຼຸດຜ່ອນ ແລະ ຢຸດເຊົາການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການສົ່ງເສີມສຸຂະພາບ;
2. ໃຫ້ການບໍາບັດ ແລະ ປິ່ນປົວ ຕາມຫຼັກການວິທະຍາສາດການແພດ;
3. ຈັດກິດຈະກໍາ ເພື່ອໃຫ້ຢຸດເຊົາການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;
4. ນໍາໃຊ້ວິທີການອື່ນ ທີ່ເຫັນວ່າມີຄວາມເໝາະສົມ.

ໂຮງໝໍ ສູນກາງ, ພາກ, ຂັ້ນ ແຂວງ, ເມືອງ ແລະ ສຸກສາລາ ຕ້ອງເຊື່ອມສານວຽກງານໃຫ້ ຄໍາປຶກສາ ແລະ ຊ່ວຍເຫຼືອຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ ເຂົ້າໃນໂຄງປະກອບການບໍລິການສາທາລະນະສຸກຂອງຕົນ ທີ່ມີຢູ່.

**ມາດຕາ 48 (ປັບປຸງ) ການເຂົ້າຮັບການບໍາບັດ, ປິ່ນປົວ**

ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງສະໝັກໃຈຕື່ນຕົວ ຫຼື ໄດ້ຮັບການເຫັນດີຈາກຄອບຄົວ, ຜູ້ປົກຄອງ ໃນການເຂົ້າຮັບການບໍາບັດ, ປິ່ນປົວ.

ຄອບຄົວ, ຊຸມຊົນ ແລະ ສັງຄົມ ຕ້ອງໄດ້ເອົາໃຈໃສ່ ໃຫ້ການຊ່ວຍເຫຼືອ ແລະ ເບິ່ງແຍງ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ ໃນໄລຍະເຂົ້າຮັບການບໍາບັດ, ປິ່ນປົວ.

## ພາກທີ V
## ຄວາມຮັບຜິດຊອບໃນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 49 (ປັບປຸງ) ຄວາມຮັບຜິດຊອບຂອງອົງການຈັດຕັ້ງພາກລັດ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບ ໃນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ການ ໃຫ້ຄວາມຮູ້, ບໍາບັດ, ປິ່ນປົວ ຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ນໍາໃຊ້ມາດຕະການຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ຕາມພາລະບົດບາດຂອງຕົນ.

**ມາດຕາ 50 (ໃໝ່) ຄວາມຮັບຜິດຊອບຂອງພາກເອກະຊົນ**

ພາກເອກະຊົນ ມີຄວາມຮັບຜິດຊອບ ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ການໂຄສະນາຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ, ການຊ່ວຍເຫຼືອຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ, ໃຫ້ຂໍ້ມູນຂ່າວສານ ແລະ ໃຫ້ການຮ່ວມມືກັບອົງການທີ່ກ່ຽວຂ້ອງຂອງລັດແຕ່ລະຂັ້ນ, ການກໍານົດລະບຽບການພາຍໃນ ກ່ຽວກັບການຈໍາກັດ ຫຼື ຄວບຄຸມການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 51 (ປັບປຸງ) ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ມີຄວາມຮັບຜິດຊອບ ໃນການປູກຈິດສໍານຶກ, ປູກລະດົມ, ສຶກສາອົບຮົມໃຫ້ຜູ້ດື່ມ ຫຼຸດຜ່ອນ ຫຼື ຢຸດເຊົາ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ມີສ່ວນຮ່ວມໃນການໂຄສະນາກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 52 (ປັບປຸງ) ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ປູກຈິດສໍານຶກ, ແນະນໍາແກ່ສະມາຊິກໃນຄອບຄົວ ໃຫ້ຫຼຸດຜ່ອນ ຫຼື ຢຸດເຊົາ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ, ຮູ້ເຖິງຜົນຮ້າຍຂອງເຄື່ອງດື່ມທີ່ມີທາດ

ເຫຼົ້າ, ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຊ່ວຍເຫຼືອໃນການບໍາບັດ, ປິ່ນປົວ ເມື່ອສະມາຊິກຄອບຄົວຕິດເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 53 (ປັບປຸງ) ຄວາມຮັບຜິດຊອບຂອງບຸກຄົນ**

ບຸກຄົນ ມີຄວາມຮັບຜິດຊອບ ບໍ່ສ້າງຄ່ານິຍົມ ແລະ ຈໍາກັດການດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ພ້ອມທັງ ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນແກ່ເຈົ້າໜ້າທີ່ ຫຼື ພາກສ່ວນທີ່ກ່ຽວຂ້ອງ ເມື່ອພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ.

ພໍ່, ແມ່, ຜູ້ປົກຄອງ, ຄູ ຕ້ອງເປັນແບບຢ່າງ ໃນການຫ່າງໄກຈາກເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ໃຫ້ຄໍາແນະນໍາແກ່ລູກ, ຫຼານ, ນັກຮຽນ, ນັກສຶກສາຂອງຕົນ ແລະ ຜູ້ເປັນລູກ, ຫຼານ, ນັກຮຽນ, ນັກສຶກສາ ກໍຕ້ອງຮັບຟັງ ແລະ ປະຕິບັດຄໍາແນະນໍາດັ່ງກ່າວ.

## ພາກທີ VI
## ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 54 (ໃໝ່) ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແມ່ນກອງທຶນສົ່ງເສີມສຸຂະພາບ ທີ່ລັດສ້າງຕັ້ງຂຶ້ນເພື່ອສະສົມ ແລະ ລະດົມທຶນ ຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນໃຫ້ມີງົບປະມານພຽງພໍ, ຍືນຍົງ ແລະ ນໍາໃຊ້ ເຂົ້າໃນວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 55 (ໃໝ່) ແຫຼ່ງຂອງກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ງົບປະມານຂອງລັດ;
2. ເກັບເພີ່ມຈາກອາກອນຊົມໃຊ້ຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ລັດຈັດເກັບ ສອງສ່ວນຮ້ອຍ ແລະ ເພີ່ມຂຶ້ນໜຶ່ງສ່ວນຮ້ອຍ ໃນທຸກ ສອງປີ;
3. ເກັບຈາກຜະລິດຕະພັນເຄື່ອງດື່ມທີ່ມີທາດເຫຼົ້າ ທຸກປະເພດທີ່ຜະລິດພາຍໃນ ແລະ ນໍາເຂົ້າຈາກຕ່າງປະເທດ ສອງຮ້ອຍກີບ ຕໍ່ ຂວດແກ້ວ, ໄຫ, ກະປ໋ອງ, ກ່ອງ ແລະ ເພີ່ມຂຶ້ນໃນແຕ່ລະໄລຍະ;
4. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຂອງລັດ ແລະ ເອກະຊົນ ທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
5. ເງິນປັບໃໝ ຈາກຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
6. ລາຍຮັບອື່ນທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 56 (ໃໝ່) ເປົ້າໝາຍການນໍາໃຊ້ກອງທຶນ**

ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ນໍາໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການເຄື່ອນໄຫວວຽກງານຂອງຄະນະກໍາມະການແຫ່ງຊາດ ເພື່ອການຄວບຄຸມ ຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;
2. ການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
3. ການປະກອບສ່ວນເຂົ້າໃນການຊ່ວຍເຫຼືອຜູ້ຕິດເຄື່ອງດື່ມທີ່ມີທາດເຫຼົ້າ;
4. ການປະກອບສ່ວນເຂົ້າໃນການປັບປຸງຄຸນນະພາບການບໍລິການສາທາລະນະສຸກ;

5. ການປະກອບສ່ວນເຂົ້າໃນກອງທຶນປະກັນສຸຂະພາບແຫ່ງຊາດ.

ການນໍາໃຊ້ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສໍາລັບແຕ່ລະເປົ້າໝາຍ ຕ້ອງປະຕິບັດຕາມແຜນງານ ແລະ ແຜນກິດຈະກໍາ ຢ່າງເຂັ້ມງວດ.

ທຸກລາຍຮັບ ແລະ ລາຍຈ່າຍ ຕ້ອງຕ້ອງຜ່ານບັນຊີເງິນຝາກ ໃນລະບົບຄັງເງິນ, ຖືບັນຊີ ແລະ ຈັດຕັ້ງປະຕິບັດການບັນຊີ ໃຫ້ຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍການບັນຊີ.

**ມາດຕາ 57 (ໃໝ່) ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ**

ການຄຸ້ມຄອງ ແລະ ການນໍາໃຊ້ ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງຕິດພັນກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ຮັບປະກັນຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

ສໍາລັບລາຍລະອຽດກ່ຽວກັບການຄຸ້ມຄອງ ແລະ ການນໍາໃຊ້ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VII
## ທຸລະກິດກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 58 (ໃໝ່) ປະເພດທຸລະກິດກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ**

ປະເພດທຸລະກິດກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ ມີດັ່ງນີ້:

1. ການຜະລິດ;
2. ການຈໍາໜ່າຍ;
3. ການບໍລິການ;
4. ການນໍາເຂົ້າ ແລະ ສົ່ງອອກ;
5. ການເກັບຮັກສາ;
6. ທຸລະກິດອື່ນ ກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ.

**ມາດຕາ 59 (ໃໝ່) ການຂໍອະນຸຍາດດໍາເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດໍາເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນໍາຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດໍາເນີນທຸລະກິດ ນໍາຂະແໜງການສາທາລະນະສຸກ.

**ມາດຕາ 60 (ໃໝ່) ເງື່ອນໄຂການດໍາເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ**

ການດໍາເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໃບທະບຽນວິສາຫະກິດ;
2. ນັກວິຊາການທີ່ມີຄວາມຮູ້ ຄວາມສາມາດ ແລະ ປະສົບການ ກ່ຽວກັບທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ;
3. ສະຖານທີ່, ທຶນ, ວັດຖຸປະກອບ, ເຄື່ອງມື ແລະ ສິ່ງອໍານວຍຄວາມສະດວກ ທີ່ຈໍາເປັນຕາມຄວາມເໝາະສົມ;

4. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດ;
5. ມາດຕະຖານປົກປັກຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ;
6. ເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 61 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງສາທາລະນະສຸກ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 62 (ໃໝ່) ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ**

ຂະແໜງການສາທາລະນະສຸກ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ພາຍໃນເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີບໍ່ອະນຸຍາດໃຫ້ດຳເນີນທຸລະກິດນັ້ນ ກໍແຈ້ງໃຫ້ຜູ້ຮ້ອງຂໍ ເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນກຳນົດເວລາດັ່ງກ່າວ.

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ມີອາຍຸການ ຕາມແຕ່ລະປະເພດທຸລະກິດ ແລະ ສາມາດຕໍ່ໄດ້ ຕາມລະບຽບການທີ່ກ່ຽວຂ້ອງ. ໃບອະນຸຍາດດຳເນີນທຸລະກິດ ບໍ່ສາມາດມອບໂອນ, ໃຫ້ເຊົ່າ ຫຼື ໃຫ້ຜູ້ອື່ນນຳໃຊ້.

**ມາດຕາ 63 (ໃໝ່) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ມີການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມທີ່ໄດ້ຮັບອະນຸຍາດ;
3. ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງສ້າງຄວາມເສຍຫາຍຕໍ່ສຸຂະພາບ, ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ທີ່ບໍ່ຮ້າຍແຮງ.

ໃນກໍລະນີ ຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ຫຼື ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການສາທາລະນະສຸກ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 64 (ໃໝ່) ການຖອນໃບອະນຸຍາດດາເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າ ຈະຖືກຖອນໃນກໍລະນີ ດັ່ງນີ້:

1. ບໍ່ປະຕິບັດຕາມຄຳສັ່ງໂຈະ;
2. ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງສ້າງຄວາມເສຍຫາຍຕໍ່ ສຸຂະພາບ, ຊີວິດ, ສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ຢ່າງຮ້າຍແຮງ.

ພາຍຫຼັງ ໄດ້ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ເຄື່ອງດື່ມທີ່ມີທາດເຫຼົ້າແລ້ວ ຂະແໜງການສາທາລະນະສຸກ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນໄປ.

## ພາກທີ VIII
## ພັນທະຂອງຜູ້ປະກອບການກ່ຽວກັບເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 65 (ປັບປຸງ) ພັນທະຂອງຜູ້ຜະລິດ**

ຜູ້ຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ;
2. ໃຫ້ຂໍ້ມູນຂ່າວສານທີ່ຖືກຕ້ອງ ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ ແກ່ຜູ້ບໍລິໂພກ;
3. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າຢ່າງຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ຕິດສະຫຼາກ, ຄຳເຕືອນສຸຂະພາບ ໃສ່ພາຊະນະບັນຈຸ, ສິ່ງຫຸ້ມຫໍ່ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມລະບຽບການ;
5. ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ ແລະ ອ້ອມຂ້າງການຜະລິດ ແລະ ປຸງແຕ່ງ ຂອງຕົນ;
6. ປະຕິບັດລະບຽບການກ່ຽວກັບ ຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງຜູ້ອອກແຮງງານ ໃນການຜະລິດເຄື່ອງດື່ມທີ່ມີທາດເຫຼົ້າ;
7. ເສຍພາສີ, ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
8. ມອບພັນທະເຂົ້າກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 66 (ປັບປຸງ) ພັນທະຂອງຜູ້ ຈຳໜ່າຍ, ບໍລິການ ແລະ ເກັບຮັກສາ**

ຜູ້ຈຳໜ່າຍ, ບໍລິການ ແລະ ເກັບຮັກສາ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຮັບປະກັນໃຫ້ມີສະຖານທີ່ ທີ່ເໝາະສົມ ໃນການຈຳໜ່າຍ ເຄື່ອງດື່ມທີ່ມີທາດເຫຼົ້າ;
2. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າຢ່າງຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດ ກວດສອບໄດ້;
3. ແນະນຳ, ອະທິບາຍ ໃຫ້ຜູ້ຊົມໃຊ້ເຄື່ອງດື່ມທີ່ມີທາດເຫຼົ້າ ຮູ້ເຖິງຜົນຮ້າຍຂອງການບໍລິໂພກ;
4. ຈຳໜ່າຍ ເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ມີການຂຶ້ນທະບຽນ ອາຫານ, ຕິດສະຫຼາກ ແລະ ຄຳເຕືອນສຸຂະພາບ ຢ່າງຖືກຕ້ອງ ຕາມລະບຽບການ;
5. ເສຍອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
6. ປົກປັກຮັກສາສິ່ງແວດລ້ອມ ໃນຂອບເຂດພື້ນທີ່ຈຳໜ່າຍຂອງຕົນ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 67 (ປັບປຸງ) ພັນທະຂອງຜູ້ ນຳເຂົ້າ ແລະ ສົ່ງອອກ**

ຜູ້ ນຳເຂົ້າ ແລະ ສົ່ງອອກ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພັນທະ ດັ່ງນີ້:

1. ຮັບປະກັນຄຸນນະພາບ, ມາດຕະຖານ ແລະ ຄວາມປອດໄພ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ;
2. ຕິດສະຫຼາກ, ຄຳເຕືອນສຸຂະພາບ ໃສ່ພາຊະນະບັນຈຸ ແລະ ສິ່ງຫຸ້ມຫໍ່ ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມລະບຽບການ;
3. ໃຫ້ຂໍ້ມູນຂ່າວສານທີ່ຖືກຕ້ອງ ແກ່ຜູ້ບໍລິໂພກ ກ່ຽວກັບຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ຕົນນຳເຂົ້າ;

4. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າຢ່າງຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດ ກວດສອບໄດ້;

5. ເສຍພາສີ, ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ມອບພັນທະເຂົ້າກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສຳລັບຜູ້ນຳເຂົ້າ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 68 (ປັບປຸງ) ຂໍ້ຫ້າມ ທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສະໜັບສະໜູນ ການໂຄສະນາ, ສົ່ງເສີມເຄື່ອງດື່ມທີ່ມີທາດເຫຼົ້າ;
3. ຊັກຊວນ, ນຳໃຊ້ ຫຼື ໃຫ້ຜູ້ມີອາຍຸຕ່ຳກວ່າ ສິບແປດປີ ດື່ມ, ຊື້-ຂາຍ, ບໍລິການເຄື່ອງດື່ມທີ່ມີທາດເຫຼົ້າ;
4. ຊັກຊວນ ຫຼື ໃຫ້ ແມ່ຍິງຖືພາ ດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;
5. ໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າ ທຸກຮູບແບບ ໂດຍບໍ່ໄດ້ຮັບອະນຸຍາດ;
6. ຈຳໜ່າຍ ເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານທີ່ ສະຖານທີ່ບໍລິການສາທາລະນະສຸກ, ສະຖານການສຶກສາ, ສຳນັກງານ, ອົງການຂອງລັດ, ສາສະໜາສະຖານ, ສວນສາທາລະນະ, ໂຮງມະໂຫລະສົບ, ສະຖານທີ່ອອກກຳລັງກາຍ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 69 (ປັບປຸງ) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ ເຄື່ອງດື່ມທີ່ມີທາດເຫຼົ້າ**

ຫ້າມຜູ້ດຳເນີນທຸລະກິດ ເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພຶດຕິກຳ ດັ່ງນີ້:

1. ສະແດງເຄື່ອງໝາຍທີ່ເປັນສັນຍາລັກ, ເຄື່ອງໝາຍການຄ້າ ຂອງເຄື່ອງດື່ມທີ່ມີທາດເຫຼົ້າ ຜ່ານສື່ມວນຊົນທຸກປະເພດ, ສະຖານທີ່ສາທາລະນະ, ຊຸມຊົນ, ສະໜາມກິລາ, ງານມະໂຫລະສົບຕ່າງໆ ລວມທັງ ປ້າຍໂຄສະນາທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ສະແດງເຄື່ອງໝາຍທີ່ເປັນສັນຍາລັກ, ເຄື່ອງໝາຍການຄ້າຂອງເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະໜາມເດັກນ້ອຍຫຼິ້ນ, ສະຖານການສຶກສາ;
3. ໂຄສະນາໃນທຸກຮູບແບບ ທີ່ເປັນການຊຸກຍູ້, ສົ່ງເສີມການບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ໃນສະຖານທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍ ສະບັບນີ້ ລວມທັງຜ່ານສື່ອອນລາຍ;
4. ອຸປະຖຳດ້ວຍຮູບການຕ່າງໆ ທີ່ເປັນຮູບການໂຄສະນາສົ່ງເສີມການຈຳໜ່າຍ ແລະ ການດື່ມເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ;
5. ຜະລິດ, ນຳເຂົ້າ, ຊື້ ຂາຍ ເຫຼົ້າເຖື່ອນ, ເຫຼົ້າປອມ, ເຫຼົ້າໝົດອາຍຸ, ເຫຼົ້າບໍ່ມີສະຫຼາກ, ບໍ່ມີຄຳເຕືອນເປັນພາສາລາວ, ບໍ່ຕິດລາຄາ ແລະ ບໍ່ຕິດສະແຕັມ ຕາມກົດໝາຍ ແລະ ລະບຽບການ;
6. ສົ່ງເສີມການຈຳໜ່າຍໃນທຸກຮູບແບບ ເຊັ່ນ ການຈົກສະຫຼາກ, ຫຼຸດລາຄາ, ແລກປ່ຽນ, ແຈກ, ແຖມ, ເຄື່ອງທີ່ລະນຶກ ແລະ ອື່ນໆ;

7. ຊຸກຊອນ, ນຳໃຊ້ ຫຼື ໃຫ້ຜູ້ມີອາຍຸຕໍ່າກວ່າ ສິບແປດປີ ຈຳໜ່າຍ, ຂາຍ, ບໍລິການ ຫຼື ໂຄສະນາເຄື່ອງດື່ມທີ່ມີທາດເຫຼົ້າ;

8. ຫຼຸດລາຄາຕໍ່າກວ່າຕົ້ນທຶນການຜະລິດ ຫຼື ຕົ້ນທຶນການນຳເຂົ້າ ບວກກັບພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ ທີ່ລັດກຳນົດ;

9. ບັງຄັບ, ນາບຂູ່ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

10. ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

11. ນຳໃຊ້ສານເຄມີທີ່ບໍ່ອະນຸຍາດ ຫຼື ສິ່ງປົນເປື້ອນອື່ນທີ່ເປັນອັນຕະລາຍ ໃສ່ເຄື່ອງດື່ມທີ່ມີທາດເຫຼົ້າ;

12. ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າໃນອັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ;

13. ຈຳໜ່າຍເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ແກ່ຜູ້ມີອາຍຸຕໍ່າກວ່າ ສິບແປດປີ, ຜູ້ມຶນເມົາ, ບຸກຄົນໃສ່ເຄື່ອງແບບ ແລະ ຜູ້ຂັບຂີ່;

14. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 70 (ປັບປຸງ) ຂໍ້ຫ້າມສຳລັບຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ**

ຫ້າມຜູ້ບໍລິໂພກເຄື່ອງດື່ມທີ່ມີທາດເຫຼົ້າ ມີ ພຶດຕິກຳ ດັ່ງນີ້:

1. ຂັບຂີ່ຍານພາຫະນະ ໃນເວລາປະລິມານທາດເຫຼົ້າໃນຮ່າງກາຍ ເກີນທີ່ໄດ້ກຳນົດໄວ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ສ້າງຄວາມວຸ້ນວາຍ, ອາລະວາດຕີກັນ, ໃຊ້ຄວາມຮຸນແຮງຕໍ່ຜູ້ອື່ນ ໂດຍສະເພາະ ແມ່ຍິງ, ເດັກນ້ອຍ ແລະ ຜູ້ອາຍຸສູງ;

3. ລົບກວນເວລາເຮັດວຽກ, ເວລາພັກຜ່ອນ, ສ້າງຄວາມລຳຄານແກ່ບຸກຄົນອື່ນ ຫຼື ສ້າງຄວາມຫຍຸ້ງຍາກໃຫ້ສັງຄົມ;

4. ປະຕິເສດການກວດຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບປະລິມານທາດເຫຼົ້າຢູ່ໃນເລືອດ, ໃນປັດສະວະ ຫຼື ລົມຫາຍໃຈ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 71 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ຕຳແໜ່ງ, ໜ້າທີ່, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ພັກພວກ ຫຼື ຍາດພີ່ນ້ອງຂອງຕົນ;

2. ຮັບ, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;

3. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ຂໍ້ມູນຂອງຜູ້ດຳເນີນທຸລະກິດ, ກົດໜ່ວງ , ຖ່ວງດຶງ, ປອມແປງເອກະສານ, ຂາດຄວາມຮັບຜິດຊອບຕໍ່ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າທີ່ໄດ້ຮັບມອບໝາຍ;

4. ປົກປ້ອງ, ຊຸກເຊື່ອງ ຫຼື ປິດບັງ, ຮ່ວມກັນກະທຳຜິດ ກັບຜູ້ດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ X
# ການຄຸ້ມຄອງ ແລະ ການກວດກາ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ
## ໝວດທີ 1
## ການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

### ມາດຕາ 72 (ປັບປຸງ) ອົງການຄຸ້ມຄອງ

ລັດຖະບານ ຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການ ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກນະຄອນຫຼວງ, ແຂວງ;
3. ຫ້ອງການສາທາລະນະສຸກເມືອງ, ນະຄອນ;
4. ໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ;

ເພື່ອເຮັດໃຫ້ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ດຳເນີນໄປຢ່າງມີປະສິດທິພາບນັ້ນ ໄດ້ສ້າງຕັ້ງຄະນະກຳມະການເພື່ອການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຊຶ່ງເອີ້ນວ່າ ຄະນະກຳມະການແຫ່ງຊາດ ເພື່ອການຄວບຄຸມ ຢາສູບ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ.

### ມາດຕາ 73 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານແລະ ໂຄງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
4. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
5. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນລຸ່ມຂອງຕົນ ທີ່ຂັດກັບກົດ ໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
6. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;
7. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມພາລະບົດບາດຂອງຕົນ;
8. ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

10. ປະສານສົມທົບກັບກະຊວງການເງິນ ໃນການກໍານົດໂຄງສ້າງ ແລະ ອັດຕາ ພາສີ, ອາກອນ, ການເກັບລາຍຮັບ ແລະ ນໍາໃຊ້ກອງທຶນຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

11. ປະສານສົມທົບ ກັບ ກະຊວງອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

13. ສະຫຼຸບ ແລະ ລາຍງານວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 74 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ເປັນແຜນການ, ແຜນງານ, ໂຄງການ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານແລະ ໂຄງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

3. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

4. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ຂອງຂັ້ນລຸ່ມຂອງຕົນ ທີ່ຂັດກັບກົດ ໝາຍ ແລະ ລະບຽບການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

5. ຊີ້ນໍາ, ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

6. ສ້າງ, ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

7. ອອກໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການຂໍອະນຸຍາດດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

8. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

9. ປະສານສົມທົບ ກັບ ພະແນກການອື່ນ, ອົງການທຽບເທົ່າພະແນກຂັ້ນແຂວງ, ຄະນະກໍາມະການປົກຄອງເມືອງ, ນະຄອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

11. ສະຫຼຸບ ແລະ ລາຍງານວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່ກະຊວງສາທາລະນະສຸກ ແລະ ຄະນະກໍາມະການປົກຄອງນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 75 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການສາທາລະນະສຸກເມືອງ, ນະຄອນ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຫ້ອງການສາທາລະນະສຸກເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານ ຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

3. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

4. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

5. ສະເໜີ ສ້າງ, ບໍາລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນໍາໃຊ້ບຸກຄະລາກອນ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

6. ອອກໃບອະນຸຍາດດໍາເນີນທຸລະກິດ ກ່ຽວກັບການຂໍອະນຸຍາດດໍາເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

8. ປະສານສົມທົບ ກັບ ຫ້ອງການອື່ນ, ອົງການທຽບເທົ່າຫ້ອງການຂັ້ນເມືອງ, ຄະນະກໍາມະການປົກຄອງຕາແສງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

9. ສະຫຼຸບ ແລະ ລາຍງານວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕໍ່ພະແນກສາທາລະນະສຸກ ນະຄອນຫຼວງ, ແຂວງ ແລະ ຄະນະກໍາມະການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 76 (ປັບປຸງ) ສິດ ແລະ ໜ້າທີ່ຂອງໜ່ວຍງານວັດທະນະທໍາ-ສັງຄົມ ຕາແສງ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໜ່ວຍງານວັດທະນະທໍາ-ສັງຄົມ ຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ເຜີຍແຜ່ຂໍ້ມູນ ຂ່າວສານ ແລະ ຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ກ່ຽວກັບ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ຜົນຮ້າຍຂອງເຄື່ອງດື່ມທີ່ມີທາດເຫຼົ້າ;

3. ເກັບກໍາສະຖິຕິ, ຕິດຕາມການຜະລິດແບບຫັດຖະກໍາ ຢ່າງທົ່ວເຖິງ;

4. ປະສານສົມທົບກັບໜ່ວຍງານອື່ນ ຂັ້ນຕາແສງ, ຫ້ອງການບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

5. ໃຫ້ຄໍາແນະນໍາ ແລະ ຊ່ວຍເຫຼືອ ຜູ້ໄດ້ຮັບຜົນກະທົບຈາກເຄື່ອງດື່ມທີ່ມີທາດເຫຼົ້າ;

6. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ກ່ຽວກັບບັນຫາທີ່ກ່ຽວຂ້ອງກັບເຄື່ອງດື່ມທີ່ມີທາດເຫຼົ້າ ຫຼື ສະເໜີໃຫ້ອົງການຂັ້ນເທິງແກ້ໄຂ;

7. ສະຫຼຸບ ແລະ ລາຍງານ ວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ຫ້ອງການສາທາລະນະສຸກເມືອງ, ນະຄອນ ແລະ ຄະນະກຳມະການປົກຄອງຕາແສງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 77 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ແລະ ມີສ່ວນຮ່ວມ ກັບຂະແໜງການສາທາລະນະສຸກ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ

**ມາດຕາ 78 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຄວບຄຸມ ເຄື່ອງດື່ມທີ່ມີທາດເຫຼົ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 72 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ສື່ມວນຊົນ.

**ມາດຕາ 79 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີ ເນື້ອໃນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

2. ກວດກາການດຳເນີນທຸລະກິດເຄື່ອງດື່ມທີ່ມີທາດເຫຼົ້າ ເປັນຕົ້ນ ການບັນຈຸ, ການຫຸ້ມຫໍ່, ການຕິດສະຫຼາກ, ຄຳເຕືອນ, ການໂຄສະນາ, ການນຳເຂົ້າ, ການສົ່ງອອກ, ການຈຳໜ່າຍ ລວມທັງສະ ຖານທີ່ດຳເນີນທຸລະກິດ ແລະ ສະຖານທີ່ບໍລິການ;

3. ກວດກາການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ;

4. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 80 ຮູບການການກວດກາ**

ການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 81 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 82 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

ສຳລັບພຶດຕິກຳ ແລະ ອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ XII
## ບົດບັນຍັດສຸດທ້າຍ

**ມາດຕາ 83 ວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ**

ສປປ ລາວ ຖືເອົາວັນທີ 19 ທັນວາ ຂອງທຸກປີ ເປັນວັນງົດດື່ມເຄື່ອງດື່ມທີ່ມີທາດເຫຼົ້າ ດ້ວຍການສ້າງຂະບວນການ, ກິດຈະກຳຕ່າງໆ ກ່ຽວກັບການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ການສົ່ງເສີມສຸຂະພາບ.

**ມາດຕາ 84 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດ ໝາຍສະບັບນີ້.

**ມາດຕາ 85 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ.... ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ ສະບັບເລກທີ 54/ສພຊ, ລົງວັນທີ 19 ທັນວາ 2014

**ປະທານສະພາແຫ່ງຊາດ**